State of California—Health and Human Services Agency
Department of Health Care Services

WILL LIGHTBOURNE
*DIRECTOR*

GAVIN NEWSOM
*GOVERNOR*

# ການຂະຫຍາຍໂຄງການລະດັບຄວາມຍາກຈົນຂອງລັດຖະບານກາງທີ່ມີຕໍ່ຄົນສູງອາຍຸ, ຄົນຕາບອດ ແລະ ຄົນພິການ

## ຂ່າວສໍາຄັນກ່ຽວກັບການຄຸ້ມຄອງສຸຂະພາບຂອງທ່ານ

ສະບາຍດີ ຜູ້ທີ່ໄດ້ຮັບຜົນປະໂຫຍດ,

**ຂ່າວດີ!**
ກົດໝາຍໃໝ່ຂອງ California ໄດ້ຮັບຜ່ານໄປແລ້ວ. ມັນອາດຈະປ່ຽນຜົນປະໂຫຍດ Medi-Cal ຂອງທ່ານ. ທ່ານອາດຈະມີສິດໄດ້ຮັບ Medi-Cal ໂດຍບໍ່ເສຍຄ່າໃນໄວໆນີ້.

ເລີ່ມແຕ່ **ເດືອນທັນວາ 1, 2020**, ກົດໝາຍໃໝ່ ຂອງລັດ California ຍົກສູງກໍານົດຂອບເຂດລາຍໄດ້ປະຈໍາເດືອນສໍາລັບການຂະຫຍາຍໂຄງການລະດັບຄວາມຍາກຈົນຂອງລັດຖະບານກາງທີ່ມີຕໍ່ຄົນສູງອາຍຸ, ຄົນຕາບອດ ແລະ ຄົນພິການ ນີ້ໝາຍຄວາມວ່າຜູ້ສະໝັກ ແລະ ຜູ້ໄດ້ຮັບຜົນປະໂຫຍດຫຼາຍຄົນຈະມີສິດໄດ້ຮັບ Medi-Cal ໂດຍບໍ່ເສຍຄ່າ.

**ມີຫຍັງເກີດຂຶ້ນຕໍ່ໄປ?**
ຜົນປະໂຫຍດຂອງ Medi-Cal ຂອງທ່ານຈະບໍ່ມີການປ່ຽນແປງດຽວນີ້. ທ່ານ**ບໍ່**ຈໍາເປັນຕ້ອງເຮັດຫຍັງດຽວນີ້. ທ່ານ**ບໍ່**ຈໍາເປັນຕ້ອງຂຽນຄໍາຮ້ອງສະໝັກ Medi-Cal ໃໝ່. ທ່ານຍັງຈະໄດ້ຮັບການຕໍ່ອາຍຸປະຈໍາປີຂອງ Medi-Cal ຂອງທ່ານ. ຖ້າທ່ານໄດ້ຮັບຊຸດເອກະສານຕໍ່ອາຍຸໃໝ່ໃນຈົດໝາຍ, ໃຫ້ຂຽນຕື່ມໃສ່. ສົ່ງໄປທີ່ເຂດປົກຄອງເມືອງຂອງທ່ານຕາມຫຼັກຖານທີ່ຕ້ອງການ.

ຖ້າໃນປະຈຸບັນທ່ານກໍາລັງໃຊ້ Medi-Cal ແລະ ໄດ້ຮັບຈົດໝາຍນີ້, ທ່ານຈະຖືກກວດກາເພື່ອໃຫ້ມີສິດໄດ້ຮັບພາຍໃຕ້ກົດໝາຍໃໝ່. ຖ້າທ່ານຖືກພົບວ່າມີສິດໄດ້ຮັບ Medi-Cal, ໂດຍບໍ່ເສຍຄ່າທ່ານຈະໄດ້ຮັບຈົດ ໝາຍສົ່ງທາງໄປສະນີ. ຈົດໝາຍຈະບອກໃຫ້ທ່ານຮູ້ເຖິງການປ່ຽນແປງ.

ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບການປ່ຽນແປງ, ໃຫ້ອ່ານຄໍາຖາມທີ່ມັກຖາມເລື້ອຍ (FAQ) ທີ່ມານໍາກັບຈົດໝາຍສະບັບນີ້. ທ່ານສາມາດຂໍເອກະສານໃນຮູບແບບທີ່ສາມາດເຂົ້າເຖິງໄດ້. ສິ່ງເຫຼົ່ານີ້ປະກອບມີອັກສອນນູນ, ຕົວພິມໃຫຍ່, ສຽງ ຫຼື ຂໍ້ມູນໃນ CD, ຫຼື ຮູບແບບອື່ນຖ້າຈໍາເປັນ.

**ມີຄໍາຖາມບໍ?**

ຖ້າທ່ານມີຄໍາຖາມ ຫຼື ທ່ານຕ້ອງການຄວາມຊ່ວຍເຫຼືອ ຫຼື ການບໍລິການນາຍພາສາໂດຍບໍ່ເສຍຄ່າ, ໃຫ້ໂທຫາສາຍໃຫ້ການຊ່ວຍເຫຼືອຂອງ Medi-Cal ທີ່ເບີ 1-800-541-5555 (TTY 1-800-430-7077). ເບີນີ້ໂທແມ່ນບໍ່ເສຍຄ່າ. ຫຼື ສົ່ງຈົດໝາຍຫາພວກເຮົາທີ່ ABDexpansion@dhcs.ca.gov.

ຂອບໃຈ,
Department of Health Care Services